# ກົດຣະບຽບສຳຫຼັບການຈູດເຜົາຢູ່ຂ້າງນອກ

(Outdoor Burning Regulations)

ຜູ້ຢູ່ອາສັຍທີ່ຮັກແພງ,

ການຈົ່ມວ່າ ເລື້ອງການຈູດເຜົາຂ້າງນອກ ແມ່ນເປັນສ່ວນນຶ່ງຂອງວຽກງານປະຈຳວັນ ຂອງຫ້ອງການດັບເພີງແລະຊ່ວຍຊີວິດປະຈຳເມືອງພອດແລນ (Portland Fire & Rescue). ພວກເຮົາຕອບຕາມຄວາມຮຽກຮ້ອງທັງຫຼາຍເຫຼົ່ານັ້ນ ຮວມມີທັງ ດ້ານການແພດ, ໄຟໄໝ້, ຊ່ວຍຊີວິດ, ອຸບັດເຫດຈະຣາຈອນ, ສືບສວນສິ່ງທີ່ເປັນພິດພັຍ ແລະເລື້ອງອື່ນໆອີກ. ດ້ວຍເຫດວ່າ ຄວາມຮຽກຮ້ອງຕ້ອງການດັ່ງກ່າວນັ້ນລົ້ນເຫຼືອ, ພວກເຮົາຈຶ່ງພຍາຍາມ ສຶກສາໃຫ້ຜູ້ຢູ່ອາສັຍທັງຫຼາຍຮູ້ກ່ຽວກັບ ຂໍ້ຣະບຽບວ່າດ້ວຍການຈູດເຜົາຢູ່ຂ້າງນອກ ເພື່ອຊ່ວຍລຸດຜ່ອນ ຄວາມຮຽກຮ້ອງຕ້ອງການ ດ້ານຄວາມປອດພັຍ ແລະໄຟໄໝ້ທີ່ຖືກຕ້ອງຕາມກົດໝາຍຢູ່ທາງນອກບ້ານ ອັນບໍ່ຈຳເປັນເຫຼົ່ານັ້ນ.

ສຳຫຼັບຂໍ້ຣະບຽບວ່າດ້ວຍ ການຈູດເຜົາຢູ່ຂ້າງນອກໂດຍສເພາະ ຢູ່**ນອກເຂດເມືອງພອດແລນ**ນັ້ນ ທ່ານຄວນຂໍເອົາຂໍ້ມູນນຳຫ້ອງການຄວບຄຸມຄຸນນະພາບສພາບແວດລ້ອມ (DEQ: Department of Environmental Quality). ໃນລະຍະນຶ່ງສເພາະຂອງປີນຶ່ງ ຈະຖືວ່າ ເປັນການຖືກຕ້ອງຕາມກົດໝາຍ ໃນການຈູດຂີ້ເຫຍື່ອຫຼັງບ້ານ ຢູ່ເຂດນອກຂອງເມືອງໄດ້ ຕຣາບໃດທີ່ທ່ານ ປະຕິບັດຕາມຂໍ້ແນະນຳ ຂອງການຈູດເຜົາຢູ່ຂ້າງນອກ. **ຢູ່ພາຍໃນຕົວເມືອງພອດແລນ**, ການຈູດເຜົາຢູ່ຂ້າງນອກ ປະເພດນີ້ແມ່ນເປັນການຕ້ອງຫ້າມ, ແຕ່ວ່າ ມີການຈູດເຜົາຢູ່ຂ້າງນອກ ບາງປະເພດ **ແມ່ນ**ຖືກຕ້ອງຕາມກົດໝາຍ. ນັ້ນມີຄື:

1. **ອຸປະກອນປີ້ງຈີ່,** ເມື່ອຖືກນຳໃຊ້ແບບມາຕຖານແລະປອດພັຍ.
2. **ໄຟທີ່ໃຊ້ສຳຫຼັບການທຳພິທີ** ສຳຫຼັບການຊຸມນຸມໃຫຍ່ ຫຼືສຖາບັນ, ເມື່ອໄດ້ຮັບການອະນຸຍາດ ຂອງຫ້ອງການຜູ້ກຳກັບດ້ານອັກຄີພັຍ (Fire Marshal's Office). ການອະນຸຍາດຂອງເຈົ້າຂອງສຖານທີ່ ຈະຕ້ອງມີເປັນລາຍລັກອັກສອນ. ການອະນຸຍາດນີ້ຕ້ອງມີລາຍເຊັນ, ລົງວັນທີ, ແລະຖືກນຳມາສເນີ ໃນເວລາຂໍໃບອະນຸຍາດ. (ໃບອະນຸຍາດ ອາດໄດ້ຮັບຢູ່ທີ່ຫ້ອງການ ປ້ອງກັນອັກຄີພັຍ (Fire Prevention Office) ຢູ່ທີ່ 1300 SE Gideon Street, Portland OR 97202 – 503-823-3712)
3. **ໄຟໃຊ້ໃນການມ່ວນຊື່ນ** ແມ່ນຖືກອະນຸຍາດໃຫ້ ຖ້າຈູດຢ່າງສອາດ, ແຫ້ງ, ຢ່າງເຊັ່ນໄມ້ຟືນ ຢູ່ໃນບ່ອນຈູດທີ່ມາຕຖານ. ໄຟປະເພດນີ້ ແມ່ນຈະຕ້ອງຖືກຈຸດຂຶ້ນ ຢູ່ໃນຫຼຸມຫຼືເຕົາ ທີ່ຕຽມໃຫ້ສເພາະ ຈຸດປະສົງນີ້. ໄຟນີ້ຈະຕ້ອງບໍ່ໃຫຍ່ເກີນກອງໄຟມາຕຖານ, ຄວາມກ້ວາງຂອງວົງມົນຕ່ຳກວ່າ 3 ຟີດ, ຄວາມສູງຂອງແປວໄຟຕ່ຳກວ່າ  2 ຟີດ.
   - ໄຟທີ່ໃຊ້ໃນການມ່ວນຊື່ນທີ່ຢູ່ໃນຫຼຸມ ບໍ່ຄວນໃຫ້ໃກ້ກັບອາຄານ ຢ່າງຕ່ຳ 15 ຟີດ. ໄຟທີ່ຢູ່ໃນປະເພດເຕົາ ບໍ່ຄວນໃຫ້ໃກ້ກັບອາຄານຢ່າງຕ່ຳ 10 ຟີດ. ໄຟທີ່ຢູ່ໃນປະເພດເຕົາດິນດາກນ້ອຍໆ ປະເພດຊີມີເນັຍ "Chimineeahs"  ບໍ່ຄວນໃຫ້ໃກ້ກັບອາຄານຢ່າງຕ່ຳ 5 ຟີດ. ເມື່ອໃດທີ່ຖືກຮຽກຮ້ອງຈາກ ຫ້ອງການກຳກັບດ້ານອັກຄີພັຍ, ເຄື່ອງໃຊ້ໃນການຈູດເຜົາຢູ່ຂ້າງນອກ ຄວນພຽບພ້ອມດ້ວຍ ເຄື່ອງຢຸດມັດໄຟ, ຕນ່າງລວດທີ່ເສັ້ນເຫຼັກໜາ 12-gauge ພ້ອມມີຫວ່າງຂອງຕນ່າງ ບໍ່ໃຫ້ຕ່ຳກວ່າ 3/8"  ນີ້ວ. ຫຼືເກີນກວ່າ  1/2" ນີ້ວ.

- ບຸກຄົນທີ່ຮັບຜິດຊອບ ຄວນຢູ່ກໍາກັບນໍາຕລອດ ແລະມີອຸປກອນມອດໄຟ ທີ່ໄດ້ຮັບການອະນຸຍາດ ຢູ່ໃກ້ມື (ຖັງຢາງສໍາຫຼັບໃຊ້ຫົດສວນ ມີນໍ້າຕັມພ້ອມຫົວສີດ).
- ຄວນໄຟທີ່ມາຈາກກອງໄຟ ຄວນບໍ່ໃຫ້ມີປະຣິມານ ທີ່ເປັນອັນຕລາຍ ຫຼືຈໍານວນທີ່ເຮັດໃຫ້ເພື່ອນບ້ານຕ້ອງຕິໄດ້.
- ບໍ່ໃຫ້ມີການຈູດຂີ້ເຫຍື່ອຈາກເສດອາຫານ ຫຼືສິ່ງຄ້າຍຄຽງກັນ ໃນໄຟເຫຼົ່ານີ້.
- ໃຫ້ມີຄວາມປອດພັຍ ໃນຄະນະທີ່ສນຸກສນານ ກັບໄຟທີ່ໃຊ້ໃນການມ່ວນຊື່ນ (ໃຫ້ມອດໄຟ ຖ້າມີລົມແຮງເຖິງ 15 ໄມຕໍ່ຊົ່ວໂມງ ຫຼືເກີນກວ່ານັ້ນ. ໃຫ້ລະວັງໃນການດື່ມສຸຣາ ຂອງຜູ້ໃດນຶ່ງທີ່ຢູ່ອ້ອມກອງໄຟ. ໃຫ້ກໍາກັບເບິ່ງເດັກນ້ອຍທີ່ຢູ່ໃນອ້ອມແອ້ມ, ເປັນຕົ້ນ.)

ຫ້ອງການດັບເພີງ (Fire Bureau) ປົກຕິຈະບໍ່ຕອບສນອງ ຄວາມຕ້ອງການດ້ານຄວາມປອດພັຍ ຂອງໄຟທີ່ໃຊ້ໃນການມ່ວນຊື່ນທີ່ໄດ້ກ່າວມາຂ້າງເທິງນັ້ນ, ແຕ່ວ່າ ເຈົ້າໜ້າທີ່ຂອງພວກເຮົາ ສາມາດໃຈ້ແຍກໄດ້ວ່າ ການຈູດເຜົາຢູ່ຂ້າງນອກໃດ ທີ່ຄວາມປອດພັຍຖືກລ່ວງລະເມີດ.

ເຈັ້ຍຄູ່ມືນີ້ຖືກຈັດຂຶ້ນມາໃຫ້ ເພື່ອຫວັງວ່າ ພວກເຮົາຈະສາມາດ ຊ່ວຍທ່ານໄດ້ລື້ນເລີງ ກັບໄຟທີ່ໃຊ້ໃນການມ່ວນຊື່ນ ຢ່າງປອດພັຍ ໃນເວລາດຽວກັນ ທີ່ທາງໜ່ວຍດັບເພີງຂອງພວກເຮົາ ຕອບສນອງຕໍ່ຄວາມຮຽກຮ້ອງ ກັບເຫດການສຸກເສີນອື່ນໆ ຂອງຄຸ້ມບ້ານພວກເຮົາ ຢ່າງວ່ອງໄວ.

ຂໍຂອບໃຈໃນຄວາມຮ່ວມມືຂອງທ່ານ. ຖ້າທ່ານຍັງມີຂໍ້ຂ້ອງໃຈອີກ, ທ່ານສາມາດໂທຫາ ຫ້ອງການຜູ້ກໍາກັບ ດ້ານອັກຄີພັຍຂອງຫ້ອງການດັບເພີງ ແລະຊ່ວຍຊີວິດຂອງເມືອງພອດແລນ ທີ່ເບີໂທ 503-823-3700.